ພະຣາຊອານາຈັກລາວ

ກະຊວງມະຫາດໄທ

ກົມໂຄສະນາການ

# ສຸນທອນພົດ

ກ່າວໃນພິທີເປີດສະພາຜູ້ແທນຣາສດອນລາວ

ແລະ

ໃນການປະຊຸມໃຫ່ຍ່ລັຖມົນຕີສະພາ

ໃນເດືອນໂນວອມ ໑໙໔໗

IMPRIMERIE DU GOUVERNEMENT

# ພິທີສລອງການເປີດສະພາຜູ້ແທນຣາສດອນ

ທົ່ວໄປຈັນວັນທີ່ ໑໕ ໃນວອນເນື່ອງໃນໂອກາດສລອງການເປີດ ສະພາຜູ້ແທນຣາສດອນຈຳ ທ່ານກ໋ອນນີ້ແຂກໃຫຍ່ຝຣັ່ງເສດປະຈຳອິນໂດຈີນໄດ້ມາຮ່ວມດ້ວຍນັ້ນ ພະບາດສົມເດັດພະເຈົ້າສີສວ່າງວົງໄດ້ຈົ່ງກ່າວພະຣາຊປຼາໄສຕໍ່ທ່ານຜູ້ຕາງໜ້າປະເທດຝຣັ່ງເສດດັ່ງນີ້ໃຈຄວາມຕໍ່ໄປນີ້:

(( ການທີ່ທ່ານມາຮ່ວມສະພາຜູ້ແທນຣາສດອນລາວກໍ່ນີ້ຄວາມໝາຍອັນສູງໃນປະຫວັດສາດຂອງວົງສານັກຄືທັນຝຣັ່ງເສດ. ການສແດງໃຫ້ເຫັນຄວາມເອື້ອເຟື້ອເຕືອແຕ່ຢ່າງຮັກໃຄ່ຂອງປະເທດຝຣັ່ງເສດຕໍ່ປະເທດຂອງພະອົງເຈົ້າແລະຄວາມເປັນຫ່ວງສເນີເປີໃນການບາຣາຊອານາຈັກຂອງພະອົງເຈົ້າ ປະຊຸ່ອະນາຄົດອັນຮຸ່ງເຮືອງ. ໃນນາມຂອງປະເທດພະອົງເອົາໆຂໍສແດງຄວາມກະຕັນຍູຕໍ່ທ່ານຢ່າງລົກຊຶ້ງ ))

ແລ້ວພະບາດສົມເດັດພະເຈົ້າມະຫາຊີວິດໄດ້ຈົ່ງທອດພະເນດມາທາງຜູ້ແທນຣາສດອນແລະອ່ານພະຣາຊສຸນທອນພົດດັ່ງນີ້ໃຈຄວາມຕໍ່ໄປນີ້:

ເຈົ້າທັງຫຼາຍ,

ມື້ນີ້ເປັນທີ່ຄວນຈາລຶກໄວ້ໃນພົງສາວະດານ. ພະອົງເຮົາຈຶ່ງພະປິຕິຍິນດີສຳແດງຄວາມສັນລະເສີນຢ່າງແທ້ຈິງຕໍ່ເຈົ້າທັງຫຼາຍໃນການທີ່ພົນເມືອງລາວໄດ້ມອບສັນທະຄືຄັດເລືອກເອົາເຈົ້າທັງຫຼາຍເປັນຜູ້ແທນຂອງເຂົາເຂົ້າມາປະຈຳຢູ່ໃນສະພານີ້.

ບ້ານເມືອງຂອງເຮົາໄດ້ມີຣັຖທັມມະນູນຕາມຣະບອບປະຊາທິປະໄຕແລ້ວ ແລະ ຈະໄດ້ເຂົ້າສູ່ການະສະໄໝໃໝ່ແຫ່ງພົງສາວະດານຂອງປະເທດ.

ເຈົ້າທັງຫຼາຍມາສູ່ທີ່ນີ້ດ້ວຍຄວາມຫວັງຕັ້ງໃຈທຳການເພື່ອໃຫ້ປະເທດລາວຢູ່ໃນຄວາມສງົບ ແລະ ໃຫ້ປະເທດລາວຈເຣີນຮຸ່ງເຮືອງພາຍໃນສາມັກຄີທັມຝຣັ່ງເສດ.

ພະອົງເຮົາຈຶ່ງແນ່ພະໄທວ່າດ້ວຍຄວາມຊ່ວຍເຫຼືອຖານມິດຕະພາບຂອງປະເທດຝຣັ່ງເສດນັ້ນ ບ້ານເມືອງຂອງເຮົາກໍຈະກັບຈເຣີນຂຶ້ນໃໝ່ ແລະ ຈະໄດ້ຕັ້ງຢູ່ໃນຖານສົມກັບຄວາມລືຊາປາກົດຂອງປະເທດຂອງເຮົາໄດ້ມີໄວ້ໃນປາງກ່ອນ.

ໃນບໍ່ຊ້ານີ້ຄນະຣັຖບານໃໝ່ຈະໄດ້ມາສເນີຕົວຕໍ່ເຈົ້າທັງຫຼາຍ ຣັຖບານນີ້ຈະເປັນຄນະປະຊາທິປະໄຕ ແລະ ພວກຈະເປັນເສນາບະດີກໍລວັນ ແຕ່ຄົນທີ່ມີຊື່ສຽງປະກອບດ້ວຍຄວາມຊຳນິຊຳນານ ແລະ ຮູ້ຈັກສາມາດອັນແທ້ຈິງຊຶ່ງມີຄວາມເຈຕະນາຢາກທຳການເພື່ອສາທາຣະນະປໂຍດຢູ່ໃນປະເທດລາວທີ່ຈັດແຈງຂຶ້ນໃໝ່ ແລະ ຮວບຮວມເຂົ້າກັນເປັນອັນໜຶ່ງອັນດຽວນີ້ພະອົງເຮົາຈຶ່ງປະກາດວ່າການທີ່ມີສິດທິພິເສດເຊື້ອໝູ່ ແລະ ການຊ່ວຍເຫຼືອ

ເອົາແຕ່ບຸກຄົນທີ່ຕົນຊອບຮັກສານັ້ນບໍ່ແລວັບໍ່ໃຫ້ມີຊາດແຕກ ຕ່າງໆກັນແລ້ວ ໝົດທຸກຄົນມີສິດທີ່ເທົ່າກັນຕາມໜ້າກົດໝາຍ. ເຈົ້າທັງຫລາຍເປັນຊາດລາວທັງໝົດທີ່ຕ້ອງເຂົ້າໃຈວ່າເຮົາຈະປະພຶດເຮັດໃຫ້ບ້ານເມືອງທີ່ຮັກຂອງເຮົາຈຳໄດ້ຮັບຄວາມເສັຽຫາຍ ທະລັງທະລາຍຍ້ອນເຫດການຄ້ຳແລ້ວບໍ່ໃຫ້ກັບເຂົ້າສູ່ສະພາບອັນດີງາມເໝືອນເດີມ ກ່ອນສິ່ງອື່ນໆທັງໝົດ.

ສຳຫລັບຈະດຳເນີນການງານອັນສູງສຸດກ່າວມາເທົ່ານີ້ໃຫ້ລ່ວງໄປດ້ວຍດີພວກຄົນທີ່ບໍ່ຈິດໃຈຖືວ່າພວກເຮົາພວກເຂົານັ້ນ ຄວນຖອນຕົວອອກເສັຽເພື່ອປະຫນ້າທີ່ໃຫ້ແກ່ພວກຄົນທີ່ຈຳເຫັນແກ່ສາທາຣະນະປໂຍດມີຄວາມຫວັງຕັ້ງໃຈທຳການສົມຮາງບ້ານເກີດເມືອງນອນແຕ່ຢ່າງດຽວ.

ສ່ວນຄົນພວກອື່ນໆຈຳບໍ່ໄດ້ຮັບຕຳແໜ່ງເປັນຄນະຣັຖບານ ຫນ້າທີ່ຂອງຕົນຊຶ່ງກະທຳຢູ່ໃນປະເທດລາວກໍເປັນຫນ້າທີ່ອັນດີງາມເໝືອນກັບຕຳແໜ່ງທີ່ມີຫນ້າທີ່ບໍຣິຫານຣາຊການບ້ານເມືອງ ເຫດວ່າ ຄົນໃນປະເທດລາວຊຶ່ງຮວບຮວມເຂົ້າກັນເປັນອັນຫນຶ່ງອັນດຽວພວກຄົນເຫຼົ່ານີ້ຕ້ອງຈະໄດ້ພິທັກຮັກສາບໍ່ໃຫ້ຫລອນເຖີຄືແສງສວ່າງແຫ່ງຄວາມສມັກສັນການຮວມເຂົ້າກັນນັ້ນ ນອກເໜືອດ້ວຍວິນັຍສັນຫຼຸດຈະຣິດ (ຄືວ່າຄວາມຍຸຍົງສົ່ງສ່ອນຊົ່ວຮ້າຍ) ເຂົາມີຫນ້າທີ່ຈະນຳທວນເຖີອັນນີ້ສຳໃຫ້ລູກຫລານຮັກສາໄວ້ສືບຕໍ່ໄປເໝືອນດັ່ງເຂົາຮັກສາໄວ້ໃນເວລານີ້ ເພື່ອປະຕິບັດຫນ້າທີ່ກ່າວມານີ້ໃຫ້ສຳເຣັດຕາມາດໝາຍ ຈຳເປັນຕ້ອງໃຫ້ມີໄມຕຣີຈິດມິດຕະພາບໃນຣະຫວ່າງພວກລາວ ມີຄວາມຄິດຈິດໃຈເປັນອັນຫນຶ່ງອັນດຽວກັນໃນຫມູ່ຊົນທຸກຊັ້ນ.

ເຈົ້າທັງຫຼາຍເອີຍ. ພະອົງເຮົາຍ່ອມຊົງຊາບວ່າເຈົ້າສຳນຶກຮູ້ສຶກຕໍ່ຄວາມຮັບຜິດຊອບອັນຫນັກອື່ງແວ້ວແຕ່ຫວ່າເປັນຫນ້າທີ່ຂອງພະອົງເຮົາຕ້ອງເຕືອນແກ່ເຈົ້າທັງຫຼາຍອີກ ໂຊກຊາຕາວາສະນາຂອງບ້ານເມືອງເຮົາໄດ້ຕົກຢູ່ໃນກິຈການທີ່ເຈົ້າທັງຫຼາຍຈະປຸບແປງຕ່າງອື່ນ ພະອົງເຮົາຈົ່ງເຊື່ອໃນພະໄທຢ່າງແນ່ນອນວ່າເຈົ້າທັງຫຼາຍຈະທຳການຝ່າຍນິຕິບັນຍັດຕ້ານແຕ່ງກົດຫມາຍອັນນັ້ນຈະຫາດ້ວຍນ້ຳຈິດນຶ່ງຄິດເຫັນແກ່ປະໂຍດແລະຄວາມສຸກສ່ວນຕົວ ຈະມີຄວາມຫວັງຕັ້ງແຕ່ຈຸດຫມາຍອັນທ່ຽງທຳໃຫ້ບ້ານເມືອງມີກົດຫມາຍອັນສຸດຕິທັມແລະອັນເມດຕາປານີ.

ພະອົງເຮົາຈົ່ງປະກາດວ່າການປະຊຸມສະພາໄດ້ເປີດແລ້ວ.

# ສຸນທອນພົດຂອງສເດັດອັຄມະຫາເສນາ

ເດັກ່າວໃນການປະຊຸມໃຫຍ່ຣັຖມົນຕຼີສະພາ

ໂດຍພະບາດສົມເດັດພະເຈົ້າມະຫາຊີວິດປະເທດລາວ

ຊົງເປັນອົງປະທານ ເມື່ອວັນທີ່ ໓໐ ໂນວອມ ໑໙໔໗.

---

ໂດຍທານໂທດທານຊີວິດ

ຂ້າພະບາດຂໍການບັງຄົມທູນໃຕ້ຝ່າລະອອງທຸລີພະບາດ
ສົມເດັດພະເຈົ້າມະຫາຊີວິດ.

ຮ່ວມທ່ານກອມມິແຊຣີຣັ້ງເສດ.

ທ່ານຜູ້ບັນຊາການທັບນະປະເທດລາວ.

ສເດັດເຈົ້າຟ້າ.

ພຼະທ່ານ.

ທ່ານທີ່ປຶກສາຣາຊການ.

ທ່ານທັງຫຼາຍ.

ໃນວາຣະພິທີວັນນີ້ຂ້າພະບາດມີຄວາມຍິນດີ ແລະ ປື້ມໃຈ ໂດຍ ສະເພາະ ທີ່ມີໂອກາດມາອຳນວຍພະພອນໄຊມົງຄົນແດ່ພະບາດ ສົມເດັດພະເຈົ້າມະຫາຊີວິດແລະສແດງຄວາມ ປາຖນາ ຂອງ ຄນະ ຣັຖບານ ແຫ່ງ ພະຣາຊ ອານາຈັກ ພ້ອມດ້ວຍຄວາມຂອບພະ ເດດພະຄຸນຢ່າງເຄົາຣົບ ທີ່ໄດ້ຊົງ ພໍ ພະ ຣາຊ ທານະ ຣິເທ ຣັບ ຄຳ

ເຊື້ອເຊີນມາເປັນອົງປະທານໃນພິທີເປີດສະພາແຕ່ງຕັ້ງກົດໝາຍປະຈຳຊາດເປັນຄັ້ງແຣກ. ອັນເປັນເຫດການໃຫຍ່ໂຕແທ້ໃນປະຫວັດສາດການເມືອງຂອງເຮົາແລະໃຫ້ກຽດຕິຍົດໃນການສເດັດມາຮ່ວມມະຫາພິທີພະສາສນາ ປະຈຳປີທີ່ນະຄອນວຽງຈັນ ແລະຊົງພະກະຣຸນາໂຜດສະຖິດເປັນອົງປະທານປະຊຸມຣັຖມົນຕີສະພາຄັ້ງສຸດທ້າຍ ແຫ່ງ ຄນະຣັຖບານຊຶ່ງຂ້າພະບາດຮັບພາຣະຈັດການມາເຖິງບັດນີ້.

ໃນໂອກາດອັນດຽວນີ້ ຣັຖບານບໍ່ລືມສແດງຄວາມຣະລຶກຫວັ້ນໄຫວ ແກ່ພີ່ນ້ອງຊາວລາວທຸກຄົນຊຶ່ງໄດ້ສມັກສລະຊີວິດຈິດໃຈປ້ອງກັນ ຜົນ ປໂຍດອັນງາມຂອງຝຣັ່ງ-ລາວໂດຍຮັກໃຈເຂົ້າຫາກອງທະຫານຕ້ານທານ ຄວາມສງົບແມ່ນເຣື່ອງປໂຍດເປັນການອັນ ຄວນຍິ່ງດ້ວຍເຫດວ່າພະອົງຈະໃຊ້ກາລະເທສະອັນເໝາະເພື່ອນຳຊົນຊາດລາວໄປສູ່ວິຖີທາງແຫ່ງຄວາມຈເຣີນ ແລະທັນສມັຍ. ເຖິງແມ່ນວ່າພວກຮັກຊາດຮຸ່ນແຣກສຸດຂີດບາງຄົນໄດ້ໂຄສະນາໃສ່ຮ້າຍມຸ່ງໝາຍໃຫ້ລຸບ ຄວາມດີຂອງປະເທດຝຣັ່ງເສດໄດ້ທຳໃຫ້ແກ່ເຮົາໄດ້ກວ່າ ໕໐ ປີມາແລ້ວນັ້ນຍັງຢູ່ໃນຄວາມຫຼົງລືມກໍດີ.

ເມື່ອເຮົາເຫຼືອວຕາເບິ່ງທຸກສິ່ງທຸກຢ່າງທີ່ໄດ້ສຳເຣັດເປັນຕົ້ນແຕ່ຍຶດປະເທດລາວໄດ້ຄືນເປັນອິດສຣະພາບ ເຮົາກໍສັງເກດໄດ້ວ່າປະຈັກວ່າ ການປ່ຽນແປງໄດ້ສຳເຣັດອັນຕ່າງໆໃຫຍ່ຫຼວງມາແລ້ວພຽງໃດ.

ປະເທດ ລາວໄດ້ ແຕກແຍກກັນເປັນສອງຝ່າຍກ່ຽວກັບຄວາມຄິດຄວາມ ເຫັນກໍ່ດີ ດ້ານປົກ ຄອງ ບ້ານ ເມືອງ ກໍ່ດີ ແລະ ໄດ້ຮັບຄວາມທໍຣະມານເນື່ອງຈາກການແບ່ງແຍກກັນມາແລ້ວນັ້ນ ບັດນີ້ປະເທດ ລາວໄດ້ຣວບຣວມເປັນອັນໜຶ່ງອັນດຽວຈຶ່ງຕົກລົງໃຈວ່າຈະບໍ່ຢູ່ ເງົາໆ ໝູ່ໃນໂລກໃຫ້ບໍ່ຊ້ຽງຊົນຊາດທັງຫຼາຍຕ່າງຄົນຕ່າງ ຈເຣີນ ດ້ວຍ ທັນຊາດ ແລະ ຫຼີກລ່ຽງ ບໍ່ໄດ້ຈຶ່ງ ປົກ ຄອງໂດຍຕົນເອງໄດ້ ທີ່ຈິງພະບາດສົມເດັດພະເຈົ້າແລະຣັຖບານຝຣັ່ງເສດໄດ້ເອື້ອເຟື້ອຊ່ວຍເຫຼືອ ໃຫ້ຊົນຊາດລາວຢູ່ໃນຖານະທັນສໄໝແລະສົ່ງເສີມໃຫ້ລາວຕູ້ສາມາດໄດ້ເປັນຫົວໜ້າການເຈົ້າແທນທີ່ຂ້າຣາຊການຝຣັ່ງເສດຈຶ່ງເປັນຜູ້ແນະນໍາແລະເປັນມິດສະຫາຍຕໍ່ໄປ.

ໃນຊົ່ວເວລານີ້ ພາຍໜ້າ ທີ່ພະຣາຊອານາຈັກຣວບຣວມເປັນອັນໜຶ່ງອັນດຽວນັ້ນ ເລືອກການປົກຄອງລະບອບປະຊາທິປະໄຕ. ພິທີຄັດເລືອກ ຕົວເປັນຜູ້ປະກອບສະພາແຕ່ງຕັ້ງຣັຖທັມມະນູນຂຶ້ນຈຶ່ງໄດ້ລົງມືດໍາເນີນການຢ່າງສໍາເຣັດຜົນຍ້ອນ ຄວາມຮອບຄອບຂອງ ຄນະ ແຕ່ງຕັ້ງ ຣັຖທັມມະນູນແລະ ຄວາມ ສາມາດອັນ ສູງຂອງຄນະ ທີ່ປຶກ ສາຝຣັ່ງເສດ ຊຶ່ງພວກ ເຮົາຂໍ ສແດງຄວາມກະຕັນຍູກະຕະເວທີຢ່າງແຮງກ້ານະທີ່ນີ້ດ້ວຍ. ພາຍຫຼັງການປ່ຽນແປງນີ້ແລ້ວ ປະເທດ ເຮົາຈັດ ການ ໂດຍທຸກວິຖີທາງເພື່ອໃຫ້ສົມກັບຖານະການເປັນຢູ່ໃນລາສານັກຄີຫັບຝຣັ່ງເສດ. ໃນທີ່ສຸດເມື່ອວັນທີ ໑໕ ທີ່ລ່ວງມານີ້ພະອົງກໍໄດ້ຊົງທໍາພິທີເປີດສະພາແຕ່ງຕັ້ງກົດໝາຍ ປະຈໍາຊາດ ຄັ້ງແຮກທີ່ດໍາເນີນໄປດ້ວຍ ຄວາມ ສງ່າຜ່າເຜີຍ. ຂໍໃຫ້ໃຈຄວາມຂອງການສະຖາປະນາໃນຊົ່ວເວລາສອງປີໄດ້ສໍາເຣັດໄປດັ່ງກ່າວມານີ້.

ໂຄງການປະຕິບັດຂອງຣັຖບານເຮົານັ້ນໄດ້ຄະດຳມາຈາກຫຼັກການຂອງວົງສາມັກຄີທັມມີຣາເຊດ ສະມາຄົມອັນປະກອບດ້ວຍກຳລັງແຮງແຮງ ແລະ ຫວັງດີບອັນໃຫຍ່ຫຼາຍຈະນີ້ດີບອັນ ອີກແບບນອນ ຄັນຫາກວ່ານີ້ຄວາມກຽດຈັງແລະຄວາມຈຳໃຈຣະຫວ່າງຈີນຊາດທັງຫຼາຍດັ່ງທີ່ເປັນມາແຕ່ກ່ອນນັ້ນ. ທີ່ຈິງສະມາຄົມນີ້ຈະສແວງຫາຍອດປັດຖຸບາຣ່ວມກັນຈຳປະກອບດ້ວຍ ຜົນປໂຍດອີກດ້ວຍກັນແລະຄວາມເຫັນອົບຕາວກັນ. ການຣວມເປັນກ້ອນເປັນໜ່ວຍຂອງມີຣາເຊດນີ້ນັບວັນນັບອີງຂື້ນຂົບສເມີ. ອັນໜຶ່ງທ່ານໂປງແລກອນ ນີ້ແຈໃຫ້ມີຣາເຊດປະຈຳອິນໂດຈີນກໍໄດ້ອະທິບາຍນະໂຍບາຍກ່ວແກ່ອິນໂດຈີນ ອີກແຈ່ມແຈ້ງໃນສຸນທອນພົດຂອງເພິ່ນທີ່ກ່າວຢູ່ເນື້ອຫາດັ່ງນັ້ນແລ້ວ.

ຕາມຫຼັກການທີ່ພ້ອມກັບເຫັນຈອບດັ່ງນີ້ຄນະຣັຖບານລາວໄດ້ຈຳກັດໂຄງການປະຕິບັດຕັ້ງແຕ່ວັນປະກອບຂຶ້ນຈົນເຖິງການບັດນີ້ສຣຸບຄວາມເປັນຂໍ້ໃຫຍ່ໃຈຄວາມດັ່ງຕໍ່ໄປນີ້:

ກ. ຊາດຕ່າງໆທີ່ມີສ່ວນນັ້ນນັ້ນ ຈັດເຂົ້າຮ່ວມໃນສະມາຄົມລາວທັງສິ້ນ. ຕັ້ງແຕ່ນີ້ຕໍ່ໄປໃຫ້ວ່າກ່າວກ່ຽວຂ້ອງເຖິງເທເໜືອເຫໂຕ້ອາແມັວວິວ໌ ຯລຯ ເພາະວ່າການຣວບຣວມພະຣາຊອານາຈັກເປັນອັນໜຶ່ງອັນດຽວ ແລະ ຄວາມສເມີພາກຣະຫວ່າງບຸກຄົນຈາດຕ່າງໆປະຈຳດິນແດນລາວນັ້ນທຸກໆຄົນກໍໄດ້ພ້ອມກັນເຫັນຈອບແລ້ວ ແຕ່ນີ້ເມື່ອໜ້າເຂົາທັງຫຼາຍຣວມເປັນນ້ຳໜຶ່ງໃຈດຽວຖານພີ່ນ້ອງກັນແລະສາມັກຄີກັນ.

ຂ. ຄວາມປອດໄພພາຍໃນ. - ພົນກຳລັງຕຳຣວດປະຈຳຊາດ ກໍໄດ້ຈັດຂຶ້ນບໍຣິເວນແລ້ວແລະກອງປ້ອງກັນຕົວພົນເຣືອນກໍກຳລັງຈະຈັດຂຶ້ນ ດັ່ງນັ້ນ ຣັຖບານເຫັນວ່າການຮ່ວມມືພົນກຳລັງທີ່ກ່າວນັ້ນ ກັບ ກອງທັບ ເທົ່າໃດຈະ ອາໄສ ເກີດ ການຈັດຕັ້ງຄວາມປອດໄພພາຍໃນພຣະຣາຊອານາຈັກ ຢ່າງສົມບູນໃນບໍ່ຊ້ານີ້.

ຄ. ການຄ້າ. - ຖານະການເງິນຂອງເຮົາໃນປັດຈຸບັນນີ້ຈະເກີດກຳລັງແຂງແຮງຂຶ້ນໄດ້ກໍແຕ່ ຍ້ອນ ເງິນ ສ່ວຍ ແລະ ການຄ້າ ຂຶ້ນເທົ່ານັ້ນ ຊຶ່ງຈະໄດ້ ຈັດການວາງຣະ ບຽບເສຖກະກິດຂຶ້ນໂດຍອາໄສເຄື່ອງມືທັນສມັຍ.

ງ. ການຄົມະນາຄົມ. - ປະເທດລາວຈະເປີດຄົມະນາຄົມແກ່ປະເທດນອກໂດຍສາມທາງເປັນຕົ້ນ ຄືທາງບົກ, ທາງນ້ຳແລະທາງອາກາດ.

ທາງສທາຣະນະເລກທີ່ ໑໓ ເຊ່ງອນ - ຫຼວງພຣະບາງແລະເລກທີ່ ໙ ສວັນນະເຂດ-ດົງຫ່າ ຈະຈັດໃຫ້ທາວເປັນໄດ້ຕລອດປີໃນບໍ່ຊ້າ ຈະພຍາຍາມສຸດກຳລັງຈັດໃຫ້ທາງ ຊ່ວງ ຊາກຊັນ-ຊາງຂວາງແລະທາງບ້ານບາງ - ຈຳເໜືອທາດໄດ້ໂດຍໃຊ້ເຄື່ອງຈັກກົນຕົນ ການເດີນເຮືອຕາມລຳນ້ຳຂອງຣະຫວ່າງສວັນນະເຂດ-ວຽງຈັນຝ່າຍໜຶ່ງ ແລະ ຣະຫວ່າງ ວຽງຈັນ-ຫຼວງພຣະບາງອີກຝ່າຍໜຶ່ງຈະໄດ້ຂຍາຍຂຶ້ນໂດຍໃຊ້ເຮືອກົນເບົາ ສ່ວນສນາມບິນນັ້ນສນາມບິນຫຼວງພຣະບາງຈະໄດ້ດັດແກ້ໃຫ້ຣະບຽບດີຍິ່ງຂຶ້ນເພື່ອສາມາດຮັບເຄື່ອງບິນຂນາດໃຫຍ່ໄດ້ທຸກຣະດູ.

ຈ. ຄວາມສັມພັນທາງເສດຖະກິດແລະວັທນະທັມ

ພາຣະອັນສຸດທ້າຍຂອງເຮົາກໍຄືຕຽມໃຫ້ປະເທດລາວໄດ້ຮັບກະແສຈາກພາຍນອກກ່ຽວກັບຄວາມຈເຣີນທາງວັທນະທັມແລະທາງເສດຖະກິດ.

ຂໍພະຣາຊທານການບັງຄົມທູນພະອົງຈົງພະກະຣຸນາຊາບໃຕ້ຝ່າລະອອງທຸລີພະບາດວ່າໂຄງການດຳເນີນຂອງພວກຂ້າພະບາດໄດ້ຕຳຣິແລ້ວແລະປະຕິບັດມາແລ້ວເປັນດ້ານ. ການປະຕິບັດໄດ້ດຳເນີນໄປຊ້າໆ ແຕ່ຫາກເປັນການແນ່ນອນແລະຄ້າງມີຫວັງຕາມຈຸດທາງທີ່ພວກຂ້າພະບາດນີ້ແລ້ວ

ກ່ອນຈະຂັບຍາຍຕໍ່ໄປອັຄມະຫາເສນາຂໍທ່ານຣັຖມົນຕີເພື່ອນຄນະທັງຫຼາຍຈາຖແລງການດຳເນີນຣາຊການຂອງທຸກກະຊວງການບັງຄົມທູນພະອົງຈົງພະກະຣຸນາຊາບໃຕ້ຝ່າລະອອງທຸລີພະບາດ.

ຂໍການບັງຄົມທູນໃຕ້ຝ່າລະອອງທຸລີພະບາດ.

ເມື່ອຄນະຣັຖມົນຕີໄດ້ແຖລງການເສັດແລ້ວ ກ່ອນຈະລົງຄວາມສຸດທ້າຍ ຂ້າພະບາດທາງຫຼາຍ (ຂໍແຈ) ຢ້ຳສັງເຂບເຖິງສຸບິສັກສຳຄັນອັນເປັນເຫດໃຫ້ໂຄງການປະຕິບັດຂອງພວກຂ້າພະບາດບໍສຳເຣັດຜົນຣາດເຣວທັນໃຈ. ໃນປະເທດໃດປະເທດໜຶ່ງເຊັ່ນປະເທດເຮົານີ້ຈີນ ຈັບການຈົ່ງເຮົາຄວນສອນໃຫ້ຮູ້ຈັກຫນ້າທີ່ຈຳເປັນກ່ຽວກັບຄວາມຈເຣີນທາງຝ່າຍການເມືອງນັ້ນຍັງນ້ອຍພໍຢູ່ມາກ ຄົນລາວສ່ວນຫຼາຍແທບຈະບໍ່ຮູ້ຈັກຫນ້າທີ່

ໃໝ່ທີ່ຕ້ອງປະຕິບັດ ເພື່ອເຂົ້າຕໍ່ສັບພະສົມສາທາຣະນະ ຊຸມຊົນວາດ ການທີ່ບໍ່ມີປະກັນທາງອັນຕິດຈອບ ຄືການ ງານ ທີ່ຕົນ ສ້າງ ຂຶ້ນ ເອງ ກໍເປັນບໍ່ລະດົກຕົກທອດມາຈາກບັນພະບຸຣຸດ ແຕ່ຄົນລາວ ມີຄວາມພຍາຍາມປະຕິບັດຕົກຕົນເປັນໄປ ຫຼາຍເຊັ່ນຄົນ. ມີຣະບຽບຮຽບຮ້ອຍ ແລະນິດໄສທີ່ເກີດຈາກຄອບຄົວຕໍ່ເນື່ອງກັນໄປໂດຍ ຖືຫຼັກຕາມພຸດທະສາສນາ. ທີ່ຈິງເຮົາຊາບຢູ່ແລ້ວວ່າຄົນຈັນ ການ ທີ່ບໍ່ປະກອບເປັນກຳລັງຂອງຣັຖປະເທດທີ່ຕ້ອງການຕໍ່ ກໍຫາກ ຂາດ ກຳລັງ ນີ້ແລ້ວ ກໍຈະເປັນການ ເສັຍ ຫາຍ ແກ່ຄວາມໝັ້ນຄົງ ຂອງ ຕົນຣະຫວ່າງ ຂ້າງ ຄຽງ ປະເທດ ເພື່ອນບ້ານທີ່ ຈເຣີນກວ່າ. ສະນັ້ນຕ້ອງຝຶກຫັດສ້າງ ລຄນຈົນ ຈັ້ງການໃຫ້ປະຕິບັດຕາມບົດ ຣະບຽບທີ່ເປັນຈິງແລະຄວາມຈຳເປັນທີ່ ການດຳເນີນຊີວິດຢ່າງໃໝ່ ຕາມ ຄວາມ ຈຳພວກ ຂ້າພະບາດ ກໍໄດ້ ລົງມື ດຳເນີນກິຈການອັນ ຄວນໃຈເວລານານນີ້ມາແລ້ວ ພວກຂ້າພະບາດຂໍປາຖນາຢ່າງ ແຮງກ້າໃຫ້ຄນະຣັຖມົນຕີທີ່ຈະແທນຄນະຂອງພວກຂ້າພະບາດ ຈົງດຳເນີນສືບໄປ.

• •

ໃນທີ່ສຸດຂ້າພະເຈົ້າຂໍສວຍໂອກາດນີ້ເພື່ອສແດງຄວາມຂອບ ຄຸນຕໍ່ທ່ານຜູ້ຕ່າງໜ້າສາທາຣະນະຣັດຝຣັ່ງເສດພະປະເທດລາວ ໃນການ ຊ່ວຍເຫຼືອ ອັນປະເສີດເລີດລ້ຳຊຶ່ງທ່ານໄດ້ໃຫ້ແກ່ການ ງານຂອງ ເຮົາໃນຖານະ ທີ່ເປັນທີ່ປຶກສາຂອງພະບາດສົມເດັດພະ ເຈົ້າແລະຂອງຣັຖບານ. ທ່ານຄອນມີແຊຝຣັ່ງເສດ, ທ່ານໄດ້ ຕອບ ຄວາມໄວ້ວາງໃຈຂອງພວກຂ້າພະເຈົ້າດ້ວຍຄວາມໄວ້ວາງໃຈ

ຊຶ່ງກັນແລະກັນ. ທ່ານມີຄວາມເຂົ້າໃຈດັ່ງນີ້ກໍເພາະທ່ານໄດ້ຊ່ວຍ ພວກເຮົາ ເປັນເວລານົມນານຊຶ່ງພາໃຫ້ທ່ານຮູ້ຈັກຄົນ, ນໍ້າໃຈແລະສັບພະສິ່ງທັງປວງໃນປະເທດເຮົາຢ່າງລຶກຊຶ້ງ.

ໃນທີ່ສຸດ ຂ້າພະເຈົ້າຂໍສະແດງຄວາມຂອບຄຸນຕໍ່ທ່ານສັກທັກ ຜູ້ບັນຊາການທັບພະປະເທດລາວ ຊຶ່ງໄດ້ມີໃຈເອື້ອເຟື້ອຊ່ວຍເຫຼືອພວກເຮົາທາງທະຫານໃນທຸກໂອກາດສເໝີມາ ແລະຂໍຍົກຍໍສັນລະເສີນ ພວກທະຫານ ຝຣັ່ງ ແລະລາວທີ່ຈັດການປ້ອງກັນໄພໃນພະຣາຊອານາຈັກແຕ່ກ່ອນໆມາຈົນກາລະບັດນີ້ໂດຍບໍ່ໄສ່ໃຈຈຳຖານພົ່ນບັອງຍ່ຳໆຂຶ້ນສເໝີ.

ພວກ ຂ້າພະເຈົ້າ ຂໍສະແດງ ຄວາມກະຕັນຍູກະຕະເວທີຢ່າງລຶກຊຶ້ງ ຕໍ່ສະເດັດເຈົ້າຟ້າ ອົງມົງກຸດ ຣາຊກຸມານ ຊຶ່ງໄດ້ເຂົ້າຮ່ວມຫຼັກການແຫ່ງວິສາມັກຄີກັບຝຣັ່ງເສດຢ່າງເຕັມທີ່ ແລະ ຮ່ວມຄວາມອຸສາພະຍາຍາມຂອງການທູດຝຣັ່ງເສດ ແລະໄດ້ຊົງສລະທຸກສິ່ງທຸກຢ່າງເພື່ອໄດ້ຄືນແດນ ທີ່ເຄາະກັນແຫ່ງປະຫວັດສາດຂອງເຮົາໄດ້ທຳໃຫ້ເສັຍໄປຊົ່ວຄາວນັ້ນຄືນມາດັ່ງເດີມ. ສະເດັດເຈົ້າຟ້າ. ຊົນຊາດລາວທົ່ວໄປຂໍສະແດງຄວາມກະຕັນຍູຢ່າງເຄົາລົບນັບຖືສູງສຸດຕໍ່ສະເດັດໂດຍຂ້າພະເຈົ້າເປັນຜູ້ແທນປາກສຽງ.

. . .

ທ້າຍສຸດແຫ່ງການຖແລງບົດຍາວສະບັບນີ້ເຮົາສັງເກດດ້ວຍຄວາມຍິນດີອັນແທ້ຈິງວ່າຂໍ້ພຫາບໍ່ໄດ້ຜ່ານພົ້ນໄປແລ້ວ. ຂ້າພະເຈົ້າ ຫວັງວ່າ ໃນບໍ່ຊ້າ ຈະມີ ສັນຍາ ມິດ ຊາດ ລະຫວ່າງ ປະເທດ .

ຝຣັ່ງເສດກັບປະເທດລາວ ຊຶ່ງຈະທຳໃຫ້ປະເທດລາວຍັງເປັນເສຣີຣັດຮ່ວມວົງສາມັກຄີຝຣັ່ງເສດແລະຈະໄດ້ຮັບເສຣີພາບໃໝ່ອີກ.

ຂໍການບັງຄົມທູນໃຕ້ຝ່າລະອອງທູລີພະບາດ.

ໃນການປະຊຸມ ອັນສຳຄັນເຊັ່ນນີ້ ຊຶ່ງເປັນ ເວລາສົ່ງ ທະນອບໜ້າຍ ຂອງພວກ ຂ້າພະບາດ ອັນ ສຳຄັນນີ້ ພວກຂ້າພະບາດ ປະຕິບັດຕາມ ຣັຖທັມມະນູນ ອັນເນື່ອງມາຈາກ ຄວາມປະສົງ ຂອງຊົນຊາດ ລາວ. ຈຶ່ງ ຂໍການ ບັງຄົມທູນພະບາດສົມເດັດພະເຈົ້າມະຫາຊີວິດ ຊົງພະບໍຣົມ ຣາຊານຸຍາດໃຫ້ພວກ ຂ້າພະບາດ ລາອອກ ຈາກ ຕຳແໜ່ງຣັຖມົນຕຣີ ແລະຂໍພະອົງຊົງຮັບເອົາ ຄຳຂອບ ພະເດຊ ພະຄຸນ ໃນການ ທີ່ ພະອົງໄດ້ຊົງໄວ້ວາງພະຣາຊະຫະຣືໄທຕໍ່ພວກ ຂ້າພະບາດໃນຊົ່ວເວລາທີ່ພວກ ຂ້າພະບາດຮັບ ຕຳແໜ່ງປະຈຳການຢູ່ນັ້ນ. ຂໍໃຫ້ພະອົງຊົງແນ່ພະຫະຣືໄທວ່າ ການ ທີ່ພວກ ຂ້າພະ ບາດລາອອກນີ້ກໍ່ຍ້ອນຄວາມຄ່ອມນ້ອມຕໍ່ ຄວາມປະສົງຂອງຊົນຊາດລາວ. ຂ້າພະບາດແນ່ໃຈວ່າໃນຄວາມ ປົກຄອງຂອງຄະນະຣັຖບານ ຊຸດໃໝ່ ຊົນ ຊາດ ລາວ ຄົງໄດ້ຮັບ ຄວາມສຸກກຸ່ມຊຸ່ມເຢັນແລະຄວາມປົກປັກຮັກສາຢ່າງ ໂອບ ອ້ອມ ອາຣີແລະກວ້າງຂວາງຂອງພະມະຫາກະສັດຂອງຕົນ.

ຂໍໃຫ້ປະເທດຝຣັ່ງຈົ່ງຈະເຣີນ!

ຂໍໃຫ້ປະເທດລາວຈົ່ງຈະເຣີນ!

ຂໍໃຫ້ວິສາມັຄຄີທີ່ມີຝຣັ່ງຈົ່ງຈະເຣີນ!

ພະຣາຊສຸນທອນພົດຈ່ຳພະບາດສົມເດັດພະເຈົ້າມະຫາຊີວິດ ປະເທດລາວໄດ້ຈາກ່າວໃນພິທີ ສລອງການເປີດສະພາຜູ້ແທນ ຣາສດອນລາວທົ່ວໆຈັບວັນທີ່ ໑໕ ໂນວອມ ໑໙໔໗.

ສຸບ ທອນ ພົດ ຈ່ຳ ສເດັດອັຄມະ ຫາເສນາໄດ້ກ່າວໃນການປະ ຊຸມໃຫ່ເຣັດຖມົນຕີສະພາ ໂດ່ພະບາດສົມເດັດພະເຈົ້າມະຫາຊີວິດ ປະເທດລາວຈົງເປັນອົງປະທານເມື່ອວັນທີ່ ໓໐ ໂນວອມ ໑໙໔໗.